# ວາລະສານຂ່າວ ບີຄວາ

ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານ
ໃຫ້ແກ່ເດັກຍິງ ແລະ ເດັກຊາຍໃນ ສປປ ລາວ

ເດືອນຕຸລາ 2017 | ສະບັບທີ 2




1-2 ຂໍ້ຄວາມຕ້ອນຮັບ
3-4 ສຽງຂອງແມ່ຍິງລາວ
5 ບາດກ້າວທຳອິດ ຂອງການປັບປຸງຫຼັກສູດສ້າງຄູປະຖົມ
6 ເລື່ອງເລົ່າຈາກພາກສະໜາມ - ການຕິດຕາມການທົດລອງປື້ມແບບຮຽນ ແລະ ຄູ່ມືຄູ ຢູ່ເມືອງເຊໂປນ ແຂວງສະຫວັນນະເຂດ
7 ນັກຮຽນຂັ້ນ ປ.3 ໃນ ສປປ ລາວ ສາມາດອ່ານ, ຂຽນ ແລະ ນັບເລກ ໄດ້ດີສໍ່າໃດ?
8 ບົດບາດຊຸມຊົນໃນການສົ່ງເສີມການອ່ານ
9-10 ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ຍົກສູງວຽກງານການປັບປຸງການຮຽນ-ການສອນວິຊາພາສາລາວໃຫ້ແກ່ນັກຮຽນຊັ້ນປະຖົມສຶກສາ
11-12 ສິ່ງອໍານວຍຄວາມສະດວກທີ່ດີກວ່າ ເພື່ອການຮຽນຮູ້ທີ່ດີຂຶ້ນ
13-14 6 ກິດຈະກຳພົ້ນເດັ່ນ ໃນປີ 2017


**ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ບີຄວາ)**

Australian Aid

European Union

# ຂໍ້ຄວາມຈາກ ທີມງານສຶກສາ ຈາກສະຖານທູດອົດສະຕຣາລີ



ຕາງໜ້າໃຫ້ທີມງານສຶກສາ ຈາກສະຖານທູດອົດສະຕຣາລີ ຂ້າພະເຈົ້າ ຂໍຂອບໃຈກະຊວງສຶກສາທິການ ແລະ ກິລາ, ສະຫະພາບເອີຣົບ ແລະ ຄູ່ຮ່ວມງານຂອງແຜນງານບີຄວາທຸກໆພາກສ່ວນ ທີ່ໃຫ້ການຮ່ວມມືເປັນຢ່າງດີ ໃນໄລຍະສອງປີທີ່ຜ່ານມາ.

ທາງສະຖານທູດອົດສະຕຣາລີຫາກໍ່ສຳເລັດການທົບທວນໄລຍະກາງ ຂອງແຜນງານບີຄວາ ເພື່ອປະເມີນຄວາມຄືບໜ້າ ແລະ ຖອດຖອນບົດຮຽນ ຈາກການຈັດຕັ້ງປະຕິບັດວຽກງານໃນໄລຍະສອງປີທີ່ຜ່ານມາ. ຜົນການທົບທວນໃນເບື້ອງຕົ້ນ ໄດ້ເນັ້ນໃຫ້ເຫັນເຖິງວຽກງານສຳຄັນຫຼາຍຢ່າງ ທີ່ໄດ້ຖືກຈັດຕັ້ງປະຕິບັດ ແລະ ຍັງຊີ້ໃຫ້ເຫັນເຖິງແນວທາງເພື່ອຮັບປະກັນໃຫ້ການຊ່ວຍເຫຼືອຂອງແຜນງານ ສືບຕໍ່ໃຫ້ຜົນປະໂຫຍດແກ່ນັກຮຽນ ທີ່ດ້ອຍໂອກາດດ້ານການສຶກສາໃນອານາຄົດ.

ຫຼັງຈາກສາມປີທີ່ໄດ້ມາປະຈຳການ ຢູ່ປະເທດລາວ ເຊິ່ງເຕັມໄປດ້ວຍປະສົບການດີໆ, ຂ້າພະເຈົ້າຈະໄດ້ກັບໄປຮັບໜ້າທີ່ໃໝ່ຢູ່ລັດແຄນເບີຣາ, ປະເທດອົດສະຕຣາລີ ໃນໄວໆນີ້. ຂ້າພະເຈົ້າຮູ້ສຶກເປັນກຽດທີ່ໄດ້ເປັນສ່ວນໜຶ່ງຂອງແຜນງານບີຄວາ ແລະ ໄດ້ມີໂອກາດຮ່ວມເຮັດວຽກກັບບັນດາຄູ່ຮ່ວມງານທີ່ມີຄວາມຕັ້ງໃຈໃນການປັບປຸງຂະແໜງສຶກສາ. ຂ້າພະເຈົ້າໂຊກດີທີ່ໄດ້ເຮັດວຽກກັບທີມງານທີ່ເກັ່ງ ທີ່ຂ້າພະເຈົ້າຢາກແນະນຳໃຫ້ພວກທ່ານຮູ້ຈັກ ຄື:

**ບຸນມີ** ຮັກວຽກໃນຂະແໜງພັດທະນາຊຸມຊົນ. ບຸນມີ ຮັບຜິດຊອບກ່ຽວກັບວຽກງານການສຶກສາຮຽນຮ່ວມ, ການມີສ່ວນຮ່ວມ ແລະ ການເຂົ້າເຖິງການສຶກສາ, ແລະ ຍັງຮັບຜິດຊອບ ວຽກກອງທຶນເພື່ອການຄົ້ນຄວ້າສິ່ງໃໝ່ດ້ານການສຶກສາ ແລະ ວຽກກຸ່ມຄູ່ຮ່ວມພັດທະນາອົງການສາກົນທີ່ບໍ່ສັງກັດລັດຖະບານຂອງແຜນງານບີຄວາ. ບຸນມີ ຍັງເປັນຜູ້ປະສານງານກ່ຽວກັບວຽກງານຄົນພິການ ໃນພະແນກຮ່ວມມືເພື່ອການພັດທະນາຂອງສະຖານທູດອົດສະຕຣາລີອີກດ້ວຍ.

**ດາວອນ** ຮຽນຈົບປະລິນຍາໂທດ້ານການຄຸ້ມຄອງການສຶກສາຈາກປະເທດອົດສະຕຣາລີ ແລະ ໄດ້ກາຍເປັນສ່ວນສຳຄັນຂອງທີມ ຫຼັງຈາກເລີ່ມເຂົ້າເຮັດວຽກໃນເດືອນທັນວາທີ່ຜ່ານມາ. ດາວອນ ຮັບຜິດຊອບວຽກງານພັດທະນາຫຼັກສູດປະຖົມສຶກສາ, ການປະສານງານໃນຂະແໜງສຶກສາ ແລະ ສະໜັບສະໜູນບົດບາດຂອງອົດສະຕຣາລີ ໃນຖານະຄູ່ຮ່ວມປະສານງານສຳລັບໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາ ໄລຍະ II ໃນ ສປປ ລາວ.

**ພອນທິດາ** ຮັບຜິດຊອບ ວຽກງານປັບປຸງຄຸນນະພາບຂອງຄູ ເຊິ່ງເປັນວຽກງານໜຶ່ງທີ່ສຳຄັນຂອງແຜນງານບີຄວາ. ພອນທິດາ ຮຽນຈົບປະລິນຍາໂທດ້ານການຄຸ້ມຄອງການສຶກສາ ຈາກປະເທດອົດສະຕຣາລີ ແລະ ຮັກການພົວພັນກັບຄູ່ຮ່ວມງານດ້ານການສຶກສາ.

**ສຸນິສາ** ເລີ່ມຮູ້ສຶກຮັກໃນວຽກການພັດທະນາການສຶກສາ ໃນເຂດຊົນນະບົດ ໃນໄລຍະທີ່ລາວຮຽນປະລິນຍາໂທດ້ານການຄຸ້ມຄອງການສຶກສາຢູ່ປະເທດອົດສະຕຣາລີ. ສຸນິສາ ຮັບຜິດຊອບວຽກງານກ່ຽວກັບການພັດທະນາຂີດຄວາມສາມາດ, ກອງທຶນສະໜັບສະໜູນຫ້ອງການສຶກສາທິການ ແລະ ກິລາເມືອງ, ການຄຸ້ມຄອງແຜນງານ ແລະ ການຕິດຕາມປະເມີນຜົນໂດຍລວມຂອງແຜນງານບີຄວາ.

**ໄກ່ຄູນ** ຮັບຜິດຊອບວຽກງານການປັບປຸງພື້ນຖານໂຄງລ່າງ, ການປົກຄອງ ແລະ ການຄຸ້ມຄອງການເງິນແຫ່ງລັດພາຍໃຕ້ແຜນງານບີຄວາ. ນອກນັ້ນ, ໄກ່ຄູນ ຍັງຮັບຜິດຊອບໂຄງການນ້ຳ, ສຸຂະອະນາໄມ ແລະ ສຸຂາພິບານ ແລະ ອາຫານໃນໂຮງຮຽນຮ່ວມກັບອົງການອາຫານໂລກ ແລະ ອົງການສະຫະປະຊາຊາດສຳລັບເດັກ.

ຂ້າພະເຈົ້າເຊື່ອວ່າ ແຜນງານບີຄວາ ຈະສາມາດສ້າງການປ່ຽນແປງທີ່ແທ້ຈິງໃນການປັບປຸງຜົນການຮຽນຢູ່ໃນລາວ ແລະ ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນກັບໂອກາດທີ່ກຳລັງຈະມາຮອດໃນອະນາຄົດອັນໃກ້ນີ້.

ຂ້າພະເຈົ້າຂໍອວຍພອນໃຫ້ທຸກທ່ານຈົ່ງມີຄວາມສຸກ, ມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ.

**ເຄລັມເມັນຊີ ອໍລີຟັນທ໌**
**ເລຂາເອກ**

# ຂໍ້ຄວາມຈາກ ແຜນງານບີຄວາ



ແຜນງານບີຄວາ ເປັນແຜນງານທີ່ຂ້ອນຂ້າງມີເອກະລັກ, ເນື່ອງຈາກເປັນແຜນງານລິເລີ່ມການຮ່ວມມືທາງດ້ານການສຶກສາ ທີ່ສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ປີ 2016-20 ຂອງກະຊວງສຶກສາທິການ ແລະ ກິລາ (ສສກ). ແຜນງານນີ້ໄດ້ຮັບການຊີ້ນໍາທິດທາງນະໂຍບາຍ ຈາກພະນັກງານອາວຸໂສ ຈາກ ສສກ, ກະຊວງການຕ່າງປະເທດ ແລະ ການຄ້າ ຂອງອົດສະຕຣາລີ (DFAT), ແລະ ຕາງໜ້າສະຫະພາບເອີຣົບ ໂດຍຜ່ານຄະນະກໍາມະການຊີ້ນໍາແຜນງານ. ການຈັດຕັ້ງປະຕິບັດວຽກງານທາງດ້ານເຕັກນິກແມ່ນໄດ້ຮັບການຄຸ້ມຄອງໂດຍພະນັກງານອາວຸໂສ ຂອງ ສສກ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງກ່ຽວຂ້ອງ ໂດຍໄດ້ຮັບຄໍາແນະນໍາ ແລະ ການຊີ້ນໍາ ຈາກທີ່ປຶກສາລາວ ແລະ ສາກົນ ທີ່ເຮັດວຽກກັບພະນັກງານກະຊວງໂດຍກົງ.

ທີມງານຂອງແຜນງານບີຄວາ ປະກອບມີ ສສກ, DFAT, ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ, ຊ່ຽວຊານລາວ ແລະ ຊ່ຽວຊານສາກົນ ທີ່ເຮັດວຽກຮ່ວມກັນເປັນອັນໜຶ່ງອັນດຽວກັນ. ການຈັດຕັ້ງປະຕິບັດແຜນງານບີຄວາແມ່ນຂຶ້ນກັບທັກສະ ແລະ ຄວາມເອົາໃຈໃສ່ ຕໍ່ວຽກງານຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບແຜນງານບີຄວາ.

ການຮ່ວມມືທາງດ້ານເຕັກນິກ ແລະ ການປະສານງານ ແມ່ນມີຄວາມສໍາຄັນຫຼາຍ ເພາະມັນຈະຊ່ວຍໃຫ້ບັນດາກິດຈະກໍາທາງດ້ານການສຶກສາຕ່າງໆປະສົບຜົນສໍາເລັດ, ໃນປະຈຸບັນນີ້ ແຜນງານບີຄວາສາມາດຍາດໄດ້ຜົນສໍາເລັດໃນການຄຸ້ມຄອງກິດຈະກໍາ ຕ່າງໆ ດັ່ງລຸ່ມນີ້:

- ການຮ່າງ ແລະ ການທົດລອງນໍາໃຊ້ຫຼັກສູດການຮຽນການສອນຂັ້ນ ປ.1 ລວມທັງການຮ່ວມມືກັບອົງການໄຈກ້າ (JICA) ແລະ ຜູ້ໃຫ້ທຶນອື່ນໆ ທີ່ເຮັດວຽກກັບ ສສກ.
- ການປັບປຸງໂຮງຮຽນ ຈໍານວນຫຼາຍກວ່າ 300 ໂຮງຮຽນ ເພື່ອເຮັດໃຫ້ສະພາບແວດລ້ອມຫ້ອງຮຽນເໝາະສົມແກ່ການຮຽນການສອນທີ່ໃຫ້ນັກຮຽນມີການຄົ້ນຄິດ ແລະ ໂຕ້ຕອບ ເພື່ອການຮຽນຮູ້.
- ການຮ່ວມມືກັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ, ຄູສອນ ແລະ ສະມາຊິກໃນຊຸມຊົນ ເພື່ອສົ່ງເສີມການອ່ານ ແລະ ເພີ່ມການມີສ່ວນຮ່ວມໃນການຮຽນຂອງນັກຮຽນທີ່ດ້ອຍໂອກາດ.
- ການຈັດຕັ້ງປະຕິບັດກິດຈະກໍາການຮຽນພາສາລາວໃນເຂດຊຸມຊົນຫ່າງໄກສອກຫຼີກ ເພື່ອເພີ່ມຄວາມສາມາດໃຫ້ພວກເຂົາຮຽນຈົບຊັ້ນປະຖົມໄດ້ຫຼາຍຂຶ້ນ.
- ການປະເມີນທັກສະພາສາລາວ ແລະ ຄະນິດສາດ ຂັ້ນພື້ນຖານສໍາລັບນັກຮຽນ ຂັ້ນ ປ.3 ແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍຜ່ານ ເຄືອຄ່າຍ ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ.

ໃນນາມຕົວແທນຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບແຜນງານບີຄວາ, ຂ້າພະເຈົ້າ ຂໍຂອບໃຈ ທີມງານຂອງແຜນງານບີຄວາທຸກທ່ານ ທີ່ໃຫ້ການຮ່ວມມື ແລະ ເອົາໃຈໃສ່ຕໍ່ ວຽກງານໃນການປັບປຸງຄຸນນະພາບຂອງການສຶກສາ ໃນທົ່ວ ສປປ ລາວ.

**ປີເຕີ ດີຄອນ**
**ຫົວໜ້າແຜນງານບີຄວາ**



# ສຽງຂອງແມ່ຍິງລາວ

ເພື່ອເປັນການສະເຫຼີມສະຫຼອງການປະກອບສ່ວນຂອງແມ່ຍິງລາວເຂົ້າໃນການສ້າງສາພັດທະນາປະເທດຊາດ ກໍຄືຢູ່ໃນ ສປປ ລາວ, ແຜນງານບີຄວາ ໄດ້ຖືໂອກາດສໍາພາດກັບບັນດາແມ່ຍິງລາວທີ່ເຮັດວຽກຢູ່ໃນຂະແໜງການສຶກສາ ໂດຍສະເພາະແມ່ນບຸກຄົນທີ່ໄດ້ປະສານງານວຽກງານການສຶກສາກັບແຜນງານບີຄວາ ເຊິ່ງບົດສໍາພາດນີ້ປະກອບດ້ວຍທັດສະນະ ແລະ ຄໍາຄິດເຫັນຂອງບັນດາແມ່ຍິງລາວ ກ່ຽວກັບ ການປ່ຽນແປງຕ່າງໆທີ່ແມ່ຍິງລາວໄດ້ພົບພໍ້ ແລະ ການສຶກສານັ້ນສາມາດຊ່ວຍເຫຼືອເຂົາເຈົ້າໄດ້ແນວໃດ. ບົດສໍາພາດເຫຼົ່ານີ້ໄດ້ຖືກຖ່າຍທອດອອກອາກາດ ຜ່ານທາງວິທະຍຸກະຈາຍສຽງແຫ່ງຊາດລາວ ເມື່ອເດືອນມີນາ ທີ່ຜ່ານມາ ກ່ອນໜ້າວັນແມ່ຍິງສາກົນ.

ເຮົາມາອ່ານບົດສໍາພາດຂອງແມ່ຍິງລາວເຫຼົ່ານີ້ ພ້ອມໆກັນ...



### ທ່ານນາງ ວາລະດຸນ ອາມາລະທິທາດາ,

**ອະດີດ ຮອງຫົວໜ້າກົມ,**

ກົມສ້າງຄູ,

ກະຊວງສຶກສາທິການ ແລະ ກິລາ

"ຂ້າພະເຈົ້າຄິດວ່າ ການສຶກສານີ້ແມ່ນມີບົດບາດສໍາຄັນຫຼາຍຕໍ່ການປ່ຽນແປງທັດສະນະຄະຕິຕໍ່ແມ່ຍິງ. ເມື່ອເຂົາມີຄວາມຮູ້, ມີທັກສະ, ມີຄວາມສາມາດ ມັນສາມາດເຮັດໃຫ້ເຂົາເຈົ້າຢືນຢູ່ຕໍ່ໜ້າເວທີ ອອກສຽງຂອງຕົວເອງໄດ້. ອັນນີ້ແມ່ນຖືວ່າເປັນອັນສໍາຄັນຫຼາຍ."



### ນາງ ຕະລຽມ ບັນອາດ

**ນັກສຶກສາຄູຊົນເຜົ່າ**

ວິທະຍາໄລຄູ ສາລະວັນ

"ເມື່ອນ້ອງຮຽນຈົບແລ້ວ ກະຈະໄປພັດທະນາບ້ານຕົນເອງ ໄປຊຸກຍູ້ສິ່ງເສີມຄົນໃນບ້ານ ເດັກນ້ອຍຜູ້ຢູ່ໃນບ້ານ ໃຫ້ເຂົ້າຮຽນ ທັງເດັກຍິງ ແລະ ເດັກຊາຍ ໃຫ້ໄດ້ຮັບການສຶກສາໝົດ, ອົບຮົມ, ເວົ້າຈາ ກັບພໍ່ແມ່ເຂົາ ໃຫ້ເຂົາຮຽນ ໃຫ້ໄດ້ເຂົ້າໂຮງຮຽນໝົດທຸກຄົນ."




### ທ່ານນາງ ນອນສີ,

**ຫົວໜ້າຂະແໜງເດັກກ່ອນໄວຮຽນ ແລະ ປະຖົມສຶກສາ**

ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ

"ເມື່ອແມ່ຍິງພວກເຮົາໄດ້ຮັບການສຶກສາແນ່ນອນ ເຂົາເຈົ້າຈະມີຄວາມຮູ້, ມີຄວາມສາມາດໃນລະດັບຕ່າງໆຕາມທີ່ໄດ້ສຶກສາມາ ແລະ ຈະເຮັດໃຫ້ເຂົາເຈົ້າສາມາດຮູ້ປົກປ້ອງຕົນເອງ, ສາມາດເຂົ້າເຖິງຂໍ້ມູນຂ່າວສານຕ່າງໆໄດ້ ແລະ ສາມາດພັດທະນາຕົນເອງ, ພັດທະນາຄອບຄົວ ແລະ ມີວຽກເຮັດງານທໍາ, ມີອາຊີບທີ່ໝັ້ນຄົງ, ມີລາຍຮັບ ແລະ ສາມາດແກ້ໄຂບັນຫາໄດ້."



### ນາງ ແຈງ ວົງຄຳຈັນ

**ນັກສຶກສາຄູຊົນເຜົ່າ,**
ວິທະຍາໄລຄູ ສາລະວັນ

"ກໍລະນີລູກຫຼາຍ ພໍ່ແມ່ເຂົາອາດຈະສົ່ງເສີມແຕ່ເພດຊາຍຫຼາຍກວ່າ ເພາະວ່າ ເຂົາເຂົ້າໃຈວ່າ ເພດຍິງເປັນເພດທີ່ອ່ອນແອ ເພາະວ່າການໄປມາຍາກ."



### ທ່ານນາງ ຈັນທະມາລາ ສຸທຳມະວົງ,

**ຜູ້ອຳນວຍການ,**
ວິທະຍາໄລຄູບ້ານເກິນ

"ໃນຖານະທີ່ຂ້າພະເຈົ້າເປັນຕົວແທນຂອງຜູ້ຍິງ ທີ່ໄດ້ມາເຖິງຈຸດນີ້ ຂ້າພະເຈົ້າກໍ່ຢາກຝາກໄປຫາບັນດາຜູ້ຍິງທົ່ວໄປຢູ່ໃນສັງຄົມ ຈົ່ງພະຍາຍາມອົດທົນ ແລະ ກໍ່ມີຄວາມພະຍາຍາມໃນການພັດທະນາບຸກຄົນຕົນເອງໃຫ້ມີຄວາມມຸ່ງໝັ້ນ ແລະ ກໍ່ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອຈະໃຫ້ເຮົາກ້າວໄປຫາ ເປັນການນຳຢູ່ໃນຂັ້ນສູງ, ສຳຄັນພວກເຮົາຕ້ອງໄດ້ຊ່ວຍກັນພັດທະນາ ແລະ ສຳຫຼວດຄືນອີກວ່າຈຸດໃດ ທີ່ເຮົາຍັງບົກພ່ອງ ເຮົາກໍ່ຕ້ອງໄດ້ປັບປຸງຂໍ້ທີ່ເຮົາບົກພ່ອງເພື່ອເຮົາຈະໄດ້ກ້າວໄປເຖິງຈຸດນັ້ນໄດ້."



### ນາງ ເອັ້ງ ສີສະເກດ,

**ນັກສຶກສາຄູຊົນເຜົ່າ,**
ວິທະຍາໄລຄູ ສາລະວັນ

"ຜູ້ຍິງກໍມີສິດທິເທົ່າທຽມກັບຜູ້ຊາຍ. ຖ້າຜູ້ຊາຍຮຽນໜັງສືໄດ້, ຜູ້ຍິງກໍຮຽນໜັງສືໄດ້ຄືກັນ. ຜູ້ຍິງກໍມີບົດບາດໃນສັງຄົມໄດ້ຄືກັນ."

# ບາດກ້າວທຳອິດ ຂອງການປັບປຸງຫຼັກສູດສ້າງຄູປະຖົມ

ນີ້ເປັນຄັ້ງທຳອິດໃນປະຫວັດສາດຂອງການໃຫ້ທຶນແກ່ ສປປ ລາວ ທີ່ແຜນງານອັນດຽວໄດ້ໃຫ້ການສະໜັບສະໜູນ ການປັບປຸງຫຼັກສູດທີ່ສຳຄັນທັງສອງຫຼັກສູດພ້ອມກັນ ຄື ຫຼັກສູດຊັ້ນປະຖົມ ສຳລັບນຳໃຊ້ໃນຫ້ອງຮຽນໃນທົ່ວປະເທດ ແລະ ຫຼັກສູດສ້າງຄູເພື່ອສ້າງ ຄູທີ່ຈະໄປສອນໃນຊັ້ນປະຖົມໃນອະນາຄົດ.



ຄູທີ່ມີປະສິດທິພາບ ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ການຮຽນຮູ້ຂອງນັກຮຽນ. ນັກຮຽນຄູ ຕ້ອງໄດ້ຮັບການປະຖົມນິເທດຢ່າງເລິກເຊິ່ງ ກ່ຽວກັບຫຼັກສູດທີ່ພວກເຂົາຈະສອນ, ໄດ້ຮັບຄຳປຶກສາກ່ຽວກັບວິທີການຊ່ວຍເຫຼືອໃຫ້ເດັກນ້ອຍໄດ້ຮຽນຮູ້ໃນຫ້ອງຮຽນ ແລະໃຫ້ເວລາພຽງພໍໃນການລົງຝຶກຫັດສອນຕົວຈິງ. ເຖິງຢ່າງໃດກໍ່ຕາມ, ຫຼັກສູດສ້າງຄູທີ່ໃຊ້ຝຶກອົບຮົມນັກຮຽນຄູໃນປະຈຸບັນ ແມ່ນຍັງບໍ່ທັນສອດຄ່ອງກັບຫຼັກສູດທີ່ສອນຢູ່ໃນຊັ້ນປະຖົມດີປານໃດ ແລະ ຍັງບໍ່ທັນໄດ້ສຸມໃສ່ການລົງຝຶກຫັດສອນຕົວຈິງໃນຫ້ອງຮຽນຢ່າງພຽງພໍ. ແຜນງານບີຄວາໄດ້ຮັບໂອກາດພິເສດໃນການປັບປຸງຫຼັກສູດສ້າງຄູໃນປະຈຸບັນ, ເຊື່ອມໂຍງກັບການລົງຝຶກຫັດສອນຕົວຈິງຢູ່ໃນຫ້ອງຮຽນ ແລະ ຮັບປະກັນວ່າຫຼັກສູດຊັ້ນປະຖົມ ແລະ ຫຼັກສູດສ້າງຄູມີຄວາມສອດຄ່ອງກັນດີ.

ໃນເດືອນມີນາ ປີ 2017, ໄດ້ມີການຈັດກອງປະຊຸມສຳມະນາ ເປັນເວລາສອງອາທິດເພື່ອປຶກສາຫາລືກ່ຽວກັບຂອບຫຼັກສູດການຮຽນ-ການສອນໃນອະນາຄົດ ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 200 ຄົນ ທີ່ມາຈາກບັນດາກົມທີ່ກ່ຽວຂ້ອງກັບການສຶກສາຂັ້ນພື້ນຖານ ໃນກະຊວງສຶກສາທິການ ແລະ ກິລາ ລວມທັງຕົວແທນຈາກບັນດາວິທະຍາໄລຄູທີ່ມີໜ້າທີ່ໃນການສ້າງຄູໃນອະນາຄົດ ແລະ ຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ເຊິ່ງມີໜ້າທີ່ຮັບຜິດຊອບໃນການປັບປຸງຫຼັກສູດຊັ້ນປະຖົມ. ກອງປະຊຸມດັ່ງກ່າວນີ້ ແມ່ນກອງປະຊຸມປຶກສາຫາລືກ່ຽວກັບຫຼັກສູດການຮຽນ-ການສອນ ທີ່ໃຫຍ່ທີ່ສຸດ ແລະ ສຳຄັນທີ່ສຸດທີ່ເຄີຍມີຜ່ານມາ.

ທ່ານນາງ ວາລະດຸນ ອາມາລະທິທາດາ, ອະດີດຮອງຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ໄດ້ກ່າວວ່າ: "ຄູສອນຈຳເປັນຕ້ອງມີຄວາມເຂົ້າໃຈກ່ຽວກັບຫຼັກສູດການຮຽນ-ການສອນ ຂອງຊັ້ນປະຖົມ ເພື່ອໃຫ້ວຽກງານສິດສອນມີປະສິດທິພາບສູງຂຶ້ນກວ່າເກົ່າ." ທ່ານໄດ້ກ່າວຕື່ມອີກວ່າ "ຜົນໄດ້ຮັບຕົ້ນຕໍຂອງກອງປະຊຸມສຳມະນາໃນຄັ້ງນີ້ ແມ່ນຜູ້ເຂົ້າຮ່ວມທຸກຄົນມີຄວາມເຂົ້າໃຈເພີ່ມຂຶ້ນ ກ່ຽວກັບການປັບປຸງຫຼັກສູດການຮຽນ-ການສອນ ຂອງຊັ້ນປະຖົມ ທີ່ທາງ ສວສ ພວມດຳເນີນຢູ່; ຜູ້ເຂົ້າຮ່ວມເຂົ້າໃຈກ່ຽວກັບ ສະມັດຖະພາບດ້ານການຮຽນຮູ້ຂອງນັກຮຽນ ທີ່ ສວສ ໄດ້ສ້າງຂຶ້ນ, ເຊິ່ງພວກເຂົາສາ ມາດເຊື່ອມໂຍງເຂົ້າກັບການບຳລຸງຄູ, ເຫັນຊ່ອງຫວ່າງຕ່າງໆ ແລະ ປັບຫຼັກສູດສ້າງຄູ ໃຫ້ເຂົ້າກັບຫຼັກສູດຊັ້ນປະຖົມ."

> "ຄູສອນຈຳເປັນຕ້ອງມີຄວາມເຂົ້າໃຈກ່ຽວກັບຫຼັກສູດການຮຽນ-ການສອນຂອງຊັ້ນປະຖົມ ເພື່ອໃຫ້ວຽກງານສິດສອນມີປະສິດທິພາບສູງຂຶ້ນກວ່າເກົ່າ."
>
> ທ່ານນາງ ວາລະດຸນ ອາມາລະທິທາດາ, ອະດີດຮອງຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ

ນອກຈາກນີ້, ໃນກອງປະຊຸມດັ່ງກ່າວ ຍັງໄດ້ມີການປຶກສາຫາລືກັນຫຼາຍບັນຫາ ແລະ ໄດ້ນຳສະເໜີຫຼັກການຕ່າງໆ ເຊັ່ນ: ຄວາມຈຳເປັນໃນການສ້າງຄວາມສົມດຸນ ລະຫວ່າງທິດສະດີ ແລະ ການຝຶກຫັດສອນຕົວຈິງ; ຄວາມສຳຄັນໃນການສຳພັນທິດສະດີ ແລະ ວິຊາຮຽນທີ່ຝຶກຫັດສອນໃນຫ້ອງຮຽນຕົວຈິງ. ຜູ້ເຂົ້າຮ່ວມກອງປະຊຸມເຫັນດີວ່າຫຼັກສູດສ້າງຄູ ຄວນປະກອບດ້ວຍການຝຶກຫັດສອນຕົວຈິງ ເປັນໄລຍະເວລາຢ່າງໜ້ອຍ 20 ອາທິດ.



ນອກຈາກນີ້, ຜູ້ເຂົ້າຮ່ວມກອງປະຊຸມຍັງສະເໜີຕື່ມອີກວ່າ ບຸລິມະສິດຕົ້ນຕໍຂອງການປັບປຸງຫຼັກສູດສ້າງຄູ ແມ່ນຕ້ອງສຸມໃສ່ວິຊາພາສາລາວ. ໃນຄວາມເປັນຈິງແລ້ວ, ພາສາແມ່ນກະແຈສຳຄັນສຳລັບການຮຽນຮູ້ທັງໝົດ, ແລະ ຜົນການຮຽນວິຊາພາສາລາວພັດຍັງຢູ່ໃນລະດັບຕໍ່າ. ອີງຕາມຜົນຂອງການປະເມີນ ການອ່ານຂອງນັກຮຽນໃນຊັ້ນປະຖົມ (Early Grade Reading Assessment) ທີ່ປະເມີນຄວາມສາມາດໃນການອ່ານ ແລະ ຄວາມເຂົ້າໃຈຂອງນັກຮຽນ ໃນປີ 2012, ເຫັນວ່າມີພຽງ 42 ສ່ວນຮ້ອຍ ຂອງນັກຮຽນຂັ້ນ ປ.5 ເທົ່ານັ້ນ ທີ່ສາມາດເຂົ້າໃຈກ່ຽວກັບສິ່ງທີ່ພວກເຂົາໄດ້ອ່ານ.

ມາຮອດປະຈຸບັນ, ວຽກງານທີ່ເປັນຮາກຖານໄດ້ສຳເລັດລົງແລ້ວ, ແຕ່ວຽກງານຫຼັກສູດໂດຍລວມແມ່ນພຽງແຕ່ຫາກໍ່ເລີ່ມຕົ້ນເທົ່ານັ້ນ. ບາດກ້າວຕໍ່ໄປແມ່ນການຕົກລົງຂັ້ນສຸດທ້າຍ ກ່ຽວກັບໂຄງຮ່າງຫຼັກສູດ ແລະ ອີງປະກອບຂອງທີມງານພັດທະນາຫຼັກສູດ ແລະ ຫຼັງຈາກນັ້ນ ຈຶ່ງຈະເລີ່ມຕົ້ນຂຽນຫຼັກສູດຕົວຈິງ.

# ເລື່ອງເລົ່າຈາກພາກສະໜາມ - ການຕິດຕາມການທົດລອງປຶ້ມແບບຮຽນ ແລະ ຄູ່ມືຄູ ຢູ່ເມືອງເຊໂປນ ແຂວງສະຫວັນນະເຂດ



ຫ້ອງ ປ.1 ໃນໂຮງຮຽນປະຖົມບ້ານແກ້ງຄໍາ, ບ້ານອຸດົມສຸກ, ບ້ານກະດັບ, ບ້ານນາຫົວນໍ້າ ແລະ ບ້ານນາຫຼວງ ແມ່ນນອນຢູ່ໃນ 25 ໂຮງຮຽນ ທົ່ວປະເທດທີ່ຖືກຄັດເລືອກສໍາລັບການທົດລອງນໍາໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ໃນສົກປີ 2016-2017 ເຊິ່ງເປັນສ່ວນໜຶ່ງຂອງວຽກງານປັບປຸງຫຼັກສູດຊັ້ນປະຖົມສຶກສາ. ຫຼັກສູດປັບປຸງໃໝ່ນີ້ສົ່ງເສີມການຮຽນການສອນທີ່ໃຫ້ນັກຮຽນມີການຄົ້ນຄິດ ແລະ ໂຕ້ຕອບ ເພື່ອການຮຽນຮູ້. ລັກສະນະພິເສດຂອງຫຼັກສູດ ປ.1 ທົດລອງນີ້ແມ່ນລວມເອົາການກຽມຄວາມພ້ອມສໍາລັບເດັກໃນໄລຍະສອງສາມອາທິດທໍາອິດຂອງການເຂົ້າຮຽນ. ການກຽມຄວາມພ້ອມນີ້ອອກແບບມາເພື່ອເຮັດໃຫ້ເດັກມີຄວາມຄຸ້ນເຄີຍກັບການໃຊ້ຊີວິດໃນໂຮງຮຽນ ແລະ ກະກຽມເຂົາເຈົ້າໃນການຮຽນອ່ານ ແລະ ຂຽນພາສາລາວ.

ທີມງານຕິດຕາມ ໄດ້ໄປຢ້ຽມຢາມບັນດາໂຮງຮຽນເຫຼົ່ານີ້ທຸກໆໄຕມາດ ເພື່ອປະເມີນຜົນການຮຽນຂອງນັກຮຽນ ແລະ ສໍາພາດຄູສອນ, ຜູ້ອໍານວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ. ຈຸດປະສົງຂອງການຢ້ຽມຢາມ ແມ່ນເພື່ອເກັບກໍາຄໍາຄິດເຫັນກ່ຽວກັບປຶ້ມແບບຮຽນ, ຄູ່ມືຄູ ແລະ ອຸປະກອນການຮຽນການສອນຂັ້ນ ປ.1 ທີ່ໄດ້ຮັບການທົດລອງ. ຫ້ອງການສຶກສາທິການ ແລະ ກິລາເມືອງເຊໂປນ ໄດ້ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອເປັນຢ່າງດີ ໃນການຈັດການຢ້ຽມຢາມໃນຄັ້ງນີ້.

> **ໃນວັນທີ່ໄປຢ້ຽມຢາມໂຮງຮຽນປະຖົມແກ້ງຄໍາ, ອາກາດຮ້ອນຫຼາຍ, ດັ່ງນັ້ນ ທີມງານຕິດຕາມ ຈິ່ງໄດ້ພານັກຮຽນໄປຢູ່ຮົ່ມກ້ອງຕົ້ນໄມ້ຢູ່ໃນເດີ່ນໂຮງຮຽນ ແລະ ສໍາເລັດການປະເມີນພາຍຫຼັງທີ່ກິນເຂົ້າສວາຍແລ້ວ. ນັກຮຽນທັງຫຼາຍຮູ້ສຶກຕື່ນເຕັ້ນກັບການທົດລອງໃນຄັ້ງນີ້ ແຕ່ວ່າບາງຄົນກໍຕ້ອງໄດ້ລໍຖ້າເປັນເວລາດົນ ຈົນກວ່າຈະເຖິງຮອບຂອງຕົນເອງ. ໃນຂະນະທີ່ລໍຖ້ານັ້ນ, ນັກຮຽນໄດ້ພາກັນສະແດງຄວາມສາມາດໃນການແຕ້ມຮູບ ແລະລະບາຍສີຕ່າງໆ.**

ຄໍາຄິດເຫັນທີ່ໄດ້ຮັບຈາກການທົດລອງຫຼັກສູດ ປ.1 ນີ້ ໄດ້ສະແດງໃຫ້ເຫັນວ່າ ຄູ ແລະ ນັກຮຽນ ມັກຮູບແບບການຈັດເນື້ອໃນຂອງປຶ້ມແບບຮຽນທົດລອງ ເຊິ່ງມີຮູບຫຼາຍຂຶ້ນ ເຮັດໃຫ້ນັກຮຽນມີຄວາມສົນໃຈ ແລະ ຢາກຮຽນຫຼາຍຂຶ້ນ. ນອກນັ້ນ, ຜົນຈາກການທົດລອງຫຼັກສູດ ປ.1 ຍັງເນັ້ນໃຫ້ເຫັນເຖິງຄວາມຈໍາເປັນທີ່ຕ້ອງມີການສະໜັບສະໜູນ ແລະ ມີອຸປະກອນການຮຽນການສອນເພີ່ມຂຶ້ນ ສໍາລັບການຮຽນການສອນພາສາລາວ, ແລະ ປະຈຸບັນແມ່ນພວມມີການທົບທວນ ແລະ ປັບປຸງຄືນປຶ້ມແບບຮຽນ ແລະ ຄູ່ມືຄູ ສໍາລັບ ຂັ້ນ ປ.1.

ຂໍ້ມູນທີ່ເກັບກໍາໄດ້ຈາກການຕິດຕາມຄັ້ງນີ້ ນອກຈາກໄດ້ຊ່ວຍບັນດາຜູ້ຂຽນຫຼັກສູດໃນການປັບປຸງຫຼັກສູດ ຂັ້ນ ປ.1 ແລ້ວ ຍັງໄດ້ຊ່ວຍບັນດາຜູ້ຂຽນຫຼັກສູດ ໃນການວາງແຜນການຂຽນສໍາລັບ ຂັ້ນ ປ.2 ເຊິ່ງໄດ້ເລີ່ມຕົ້ນຂຽນໃນເດືອນກັນຍາທີ່ຜ່ານມາ.



# ນັກຮຽນຂັ້ນ ປ.3 ໃນ ສປປ ລາວ ສາມາດອ່ານ, ຂຽນ ແລະ ນັບເລກ ໄດ້ດີສໍ່າໃດ?

ໃນໄລຍະສອງອາທິດຕົ້ນເດືອນພຶດສະພານີ້, ໄດ້ມີການປະເມີນຜົນການຮຽນ (ASLO) ຂອງນັກຮຽນຊັ້ນປະຖົມສຶກສາປີທີ 3 ຈຳນວນ 17,535 ຄົນ ເພື່ອວັດທັກສະຄວາມສາມາດວິຊາພາສາລາວ ແລະ ວິຊາຄະນິດສາດພື້ນຖານ. ການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວນີ້ ແມ່ນເປັນສິ່ງທີ່ໜ້າປະທັບໃຈຫຼາຍ ເພາະຕ້ອງໄດ້ໃຊ້ທີມງານຜູ້ເກັບກຳຂໍ້ມູນຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສ.ວ.ສ) ພະນັກງານຈາກກົມ ແລະ ສູນຕ່າງໆຈາກກະຊວງສຶກສາທິການ ແລະ ກິລາ ແລະ ພະນັກງານຈາກພະແນກສຶກສາທິການ ແລະ ກິລາແຂວງ ແລະ ພະນັກງານຈາກຫ້ອງການສຶກສາທິການ ແລະ ກິລາເມືອງ ເຖິງ 456 ຄົນ ເພື່ອລົງເກັບກຳຂໍ້ມູນຢູ່ທີ່ໂຮງຮຽນປະຖົມ 1,305 ແຫ່ງໃນທົ່ວປະເທດ. ພ້ອມດຽວກັນນີ້ກໍມີຫົວໜ້າໂຮງຮຽນ, ຄູ ແລະ ນັກຮຽນຕະຫຼອດຮອດພໍ່ແມ່ຜູ້ປົກຄອງນັກຮຽນ ກໍໄດ້ໃຫ້ການຮ່ວມມືເປັນຢ່າງດີ.

ທ່ານ ຄຳຈັນ ລັດທະຍອດ, ຫົວໜ້າພະແນກປະເມີນຜົນຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ກ່າວວ່າ: "ນີ້ແມ່ນຄັ້ງທຳອິດ ທີ່ຈັດຕັ້ງການປະເມີນຜົນ ແອັສໂລ (ASLO) ໃນຂອບເຂດທົ່ວປະເທດ ເຊິ່ງກວມເອົາ 148 ຕົວເມືອງ". "ມີສິ່ງທີ່ທ້າທາຍຫຼາຍອັນ ໃນການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວນີ້ ໂດຍສະເພາະ ແມ່ນເວລາທີ່ນຳໃຊ້ໃນການຈັດແບ່ງອຸປະກອນຕ່າງໆສຳລັບແຕ່ລະໂຮງຮຽນ ແລະ ການຈັດຕັ້ງປະຕິບັດເຊັ່ນ: ການລົງລະຫັດໂຮງຮຽນໃສ່ຊອງ ແລະ ບັນຈຸແບບທົດສອບນັກຮຽນ, ແບບສອບຖາມນັກຮຽນ, ແບບສອບຖາມຄູ ແລະ ແບບສອບຖາມຜູ້ອຳນວຍການໂຮງຮຽນໃສ່ຊອງ ມີເວລາພຽງແຕ່ 3 ມື້ເທົ່ານັ້ນ ແລະ ໄລຍະເວລາການລົງເກັບຂໍ້ມູນ ກໍແມ່ນຊ່ວງທີ່ຈະສອບເສັງທ້າຍປີ ແລະ ພັກພາກຮຽນ.

> "ນ້ອງຮູ້ສຶກວ່າ ຄຳຖາມວິຊາຄະນິດສາດມີຫຼາຍອັນໜ້າສົນໃຈ ເພາະມີຮູບປະກອບທີ່ສວຍງາມ ແລະ ນ້ອງເອງກໍສາມາດຕອບຄຳຖາມທັງໝົດ ກ່ອນເວລາທີ່ກຳນົດໄວ້ອີກ"
>
> ນ້ອງ ນະລິມິນ, ນັກຮຽນຂັ້ນ ປ.3.

ແບບທົດສອບ ແອັສໂລ (ASLO) ໄດ້ຖືກພັດທະນາຂຶ້ນ ໂດຍການຮ່ວມມືລະຫວ່າງທີມງານປະເມີນຜົນຂອງ ສ.ວ.ສ ແລະ ບັນດາຊ່ຽວຊານຈາກສະພາການຄົ້ນຄວ້າດ້ານການສຶກສາອົດສະຕຣາລີ ໂດຍໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ. ແບບທົດສອບດັ່ງກ່າວນັ້ນ ມີຈຳນວນສອງຊຸດ ເຊິ່ງແຕ່ລະຊຸດຈະມີ ຄຳຖາມ 45 ຂໍ້ ໃນນີ້ຈະມີຄຳຖາມແບບປາລະໄນຫຼາຍກວ່າຄຳຖາມແບບອັດຕະໄນ ພ້ອມກັນນີ້ ກໍມີແບບສອບຖາມສະເພາະ ສຳລັບນັກຮຽນ, ຄູສອນ ແລະ ຜູ້ອຳນວຍການໂຮງຮຽນ.

ໃນການລົງເກັບກຳຂໍ້ມູນຄັ້ງນີ້ ທາງແຜນງານບີຄວາໄດ້ລົງຕິດຕາມ ແລະ ໄດ້ສຳພາດນ້ອງ ອານຸລັກ, ອາຍຸ 9 ປີ, ນັກຮຽນຂັ້ນ ປ.3 ຈາກໂຮງຮຽນປະຖົມສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນ້ອງໄດ້ກ່າວດ້ວຍຄວາມພາກພູມໃຈວ່າ: "ນ້ອງບໍ່ເຄີຍໄດ້ເຂົ້າສອບເສັງແບບນີ້ຈັກເທື່ອ". "ດັ່ງນັ້ນ, ນ້ອງຈຶ່ງຮູ້ສຶກຕື່ນເຕັ້ນຫຼາຍເມື່ອໄດ້ເຂົ້າຮ່ວມການປະເມີນດັ່ງກ່າວນີ້". ນ້ອງ ນະລິມິນ ທີ່ເປັນໝູ່ກັນຍັງໄດ້ກ່າວຕື່ມວ່າ: "ນ້ອງຮູ້ສຶກວ່າ ຄຳຖາມວິຊາຄະນິດສາດ ມີຫຼາຍອັນໜ້າສົນໃຈເພາະມີຮູບປະກອບທີ່ສວຍງາມ ແລະ ນ້ອງເອງກໍສາມາດຕອບຄຳຖາມທັງໝົດ ກ່ອນເວລາທີ່ກຳນົດໄວ້ອີກ". ທ່ານ ບັນຈົງ ໄຊຍະລາດ ໜຶ່ງໃນຜູ້ລົງເກັບກຳຂໍ້ມູນ ຈາກຫ້ອງການສຶກສາທິການ ແລະ ກິລາເມືອງຈັນທະບູລີ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບໜ້າວຽກໃນການເກັບກຳຂໍ້ມູນ ເຊິ່ງຈັດຂຶ້ນໂດຍ ສ.ວ.ສ ໂດຍການສະໜັບສະໜູນຂອງແຜນງານບີຄວາ ໄດ້ໃຫ້ຄວາມເຫັນວ່າ: "ຢູ່ໃນກອງປະຊຸມສຳມະນາດັ່ງກ່າວ, ພວກເພິ່ນໄດ້ເອົາແບບທົດສອບ ແລະ ແບບສອບຖາມດັ່ງກ່າວໃຫ້ພວກເຮົາເບິ່ງ ແລະ ອະທິບາຍກ່ຽວກັບຂັ້ນຕອນຕ່າງໆໃນການນຳໃຊ້ ແລະ ການສຸ່ມເລືອກເອົານັກຮຽນທີ່ຈະມາເຮັດແບບທົດສອບ ແລະ ແບບສອບຖາມ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນການເກັບຂໍ້ມູນຢູ່ໃນແຕ່ລະໂຮງຮຽນ. ໃນການລົງເກັບຂໍ້ມູນຄັ້ງນີ້ ໃຊ້ເວລາຢູ່ 2 ມື້ ຕໍ່ໜຶ່ງໂຮງຮຽນ ຍ້ອນວ່າ: ເຄື່ອງມືເກັບຂໍ້ມູນມີສອງແບບ ຄື: ແບບທົດສອບຂຽນ ແລະ ແບບສອບຖາມກັບນັກຮຽນແຕ່ລະຄົນ; ໂດຍລວມແລ້ວ, ຄຳຖາມເຫຼົ່ານີ້ ກໍບໍ່ຍາກ ຫຼື ງ່າຍເກີນໄປສຳລັບນັກຮຽນ".

ໃນໂອກາດດັ່ງກ່າວນີ້, ທ່ານ ຄຳຈັນ ຍັງໄດ້ໃຫ້ຮູ້ຕື່ມວ່າ: "ໃນການປະເມີນຜົນສຳເລັດການຮຽນຂອງນັກຮຽນຊັ້ນປະຖົມສຶກສາປີທີ 3 ຄັ້ງນີ້ ແມ່ນເພື່ອນຳໃຊ້ເປັນຂໍ້ມູນປີຖານໃນການປະເມີນການປ່ຽນແປງຜົນໄດ້ຮັບຂອງການຮຽນຮູ້ ແລະ ປະສິດທິພາບຂອງຫຼັກສູດສະບັບປັບປຸງທີ່ຈະມີຂຶ້ນໃນຕໍ່ໜ້າ (ປີ 2020-2021) ພາຍໃຕ້ໂຄງການປັບປຸງຫຼັກສູດ ແລະ ສື່ການຮຽນ-ການສອນຊັ້ນປະຖົມສຶກສາ ໂດຍການສະໜັບສະໜູນຂອງແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານຢູ່ ສປປ ລາວ (BEQUAL)" ແລະ ໂຄງການປັບປຸງການຮຽນການສອນວິຊາຄະນິດສາດຊັ້ນປະຖົມ ສະໜັບສະໜູນໂດຍອົງການໄຈກ້າ (JICA). ສິ່ງດັ່ງກ່າວນີ້ຈະຊ່ວຍໃຫ້ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ, ລັດຖະບານ ອົດສະຕຣາລີ ແລະ ຄູ່ຮ່ວມພັດທະນາອື່ນໆ ສາມາດວາງເປົ້າໝາຍ ແລະ ຕິດຕາມກວດກາຜົນໄດ້ຮັບຂອງການຊ່ວຍເຫຼືອໄດ້ດີຂຶ້ນກວ່າເກົ່າ.





# ບົດບາດຊຸມຊົນໃນການສົ່ງເສີມການອ່ານ

ໃນໄລຍະທົດສະວັດທີ່ຜ່ານມາ, ສປປ ລາວ ໄດ້ມີຄວາມຄືບໜ້າສູງໃນການເພີ່ມການເຂົ້າເຖິງການສຶກສາ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີຫຼາຍຊຸມຊົນໃນເຂດຫ່າງໄກສອກຫຼີກ ຍັງຂາດອຸປະກອນການຮຽນການສອນທີ່ຈຳເປັນ ແລະ ອັດຕາປະລະທີ່ສູງສົ່ງຜົນກະທົບຜົນທາງລົບຕໍ່ການຮຽນຂອງເດັກ ໂດຍສະເພາະແມ່ນການຮູ້ໜັງສື.

ກຸ່ມຄູ່ຮ່ວມພັດທະນາຂອງແຜນງານບົຄວາ ເຊິ່ງປະກອບດ້ວຍ ອົງການແພລນ ສາກົນປະຈຳ ສປປ ລາວ, ອົງການຊ່ວຍເຫຼືອເດັກ, ອົງການຊາຍຟັນ ແລະ ອົງການສຸພານິມິດ ຈຶ່ງໄດ້ສຸມໃສ່ ການສົ່ງເສີມການມີສ່ວນຮ່ວມຂອງເດັກຍິງ-ຊາຍທີ່ດ້ອຍໂອກາດ ຢູ່ໃນໂຮງຮຽນຈຳນວນ 171 ແຫ່ງ ໃນ 6 ຕົວເມືອງ ຂອງແຂວງຫຼວງພະບາງ, ອຸດົມໄຊ, ຫົວພັນ ແລະ ຄຳມ່ວນ.

ກຸ່ມຄູ່ຮ່ວມພັດທະນາໄດ້ສະໜັບສະໜູນກິດຈະກຳຫຼາກຫຼາຍປະເພດ ເພື່ອຊ່ວຍໃຫ້ເດັກນ້ອຍຮຽນຮູ້, ຝຶກຫັດ ແລະ ມີຄວາມມ່ວນຊື່ນກັບການອ່ານພາສາລາວ ເຊິ່ງໄດ້ສ້າງຄັງປຶ້ມ, ຈັດກິດຈະກຳຕັ້ງຄ້າຍເພື່ອສົ່ງເສີມການອ່ານ ແລະ ຈັດເທດສະການອ່ານໜັງສືເພື່ອສົ່ງເສີມໃຫ້ເດັກນ້ອຍຮັກການອ່ານ ແລະ ໄດ້ມີກິດຈະກຳເພື່ອສ້າງຈິດສຳນຶກໃຫ້ແກ່ພໍ່ແມ່ຜູ້ປົກຄອງກ່ຽວກັບຄວາມສຳຄັນຂອງການອ່ານໜັງສື.

ໂຄງການດັ່ງກ່າວໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນກຸມພາ ປີ 2017 ທີ່ຜ່ານມາ ໂດຍໄດ້ມີການຈັດຝຶກອົບຮົມໃຫ້ຜູ້ເຂົ້າຮ່ວມຈາກ ກຸ່ມຄູ່ຮ່ວມພັດທະນາ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ກ່ຽວກັບວິທີການໃນການສົ່ງເສີມການອ່ານ. ອາສາສະໝັກຊຸມຊົນຈຳນວນ 40 ຄົນ ແລະ ພໍ່ແມ່ຜູ້ປົກຄອງນັກຮຽນຈຳນວນ 40 ຄົນ ຈາກບ້ານເປົ້າໝາຍຂອງໂຄງການ ໄດ້ເຂົ້າຮ່ວມກິດຈະກຳ ແລະ ໄດ້ໃຫ້ຂໍ້ມູນທີ່ສຳຄັນກ່ຽວກັບສະພາບແວດລ້ອມຢູ່ໃນຊຸມຊົນ.

ນັບແຕ່ເດືອນມີນາ ປີ 2017 ເປັນຕົ້ນມາ, ກຸ່ມຄູ່ຮ່ວມພັດທະນາ ໄດ້ຈັດກອງປະຊຸມກັບຊຸມຊົນເພື່ອກະຕຸກຊຸກຍູ້ໃຫ້ຊຸມຊົນມີສ່ວນຮ່ວມໃນການສົ່ງເສີມການອ່ານຫຼາຍຂຶ້ນ, ໄດ້ສ້າງຄັງປຶ້ມ ຈຳນວນ 171 ແຫ່ງ ແລະ ແຈກຢາຍປຶ້ມຫຼາຍກວ່າ 43,000 ຫົວ. ຊຸມຊົນທີ່ເຂົ້າຮ່ວມໂຄງການນີ້ ມີຄວາມກະຕືລືລົ້ນໃນການປະກອບສ່ວນຊັບພະຍາກອນຕ່າງໆ ເພື່ອລິເລີ່ມຂະບວນການດັ່ງກ່າວນີ້. ຍົກຕົວຢ່າງ ໃນແຂວງຫົວພັນ ບັນດາຊຸມຊົນໄດ້ບໍລິຈາກຖ້ານໃສ່ປຶ້ມເພື່ອເປັນບ່ອນຈັດວາງປຶ້ມໃຫ້ແກ່ໂຮງຮຽນ.

ທ່ານນາງ ພວງ ບຸນມີໄຊ, ອາຍຸ 28 ປີ, ເປັນຄູສອນຢູ່ ໂຮງຮຽນປະຖົມປ່າຫວານ, ເມືອງຊຳເໜືອ, ແຂວງຫົວພັນ ຜູ້ທີ່ໄດ້ຮັບຖ້ານໃສ່ປຶ້ມຈຳນວນສາມຖ້ານ ໄດ້ກ່າວວ່າ "ຖ້ານໃສ່ປຶ້ມເຫຼົ່ານີ້ ຈະສ້າງແຮງຈູງໃຈໃຫ້ແກ່ນັກຮຽນ ລວມທັງນັກຮຽນຊົນເຜົ່າຕ່າງໆ ໃນໝູ່ບ້ານຂອງພວກເຮົາ ຜູ້ທີ່ບໍ່ຄ່ອຍມີຄວາມໝັ້ນໃຈໃນການອ່ານພາສາລາວ ໃຫ້ສົນໃຈເຂົ້າມາເບິ່ງປຶ້ມ ແລະ ສົນທະນາກັນກ່ຽວກັບຮູບພາບຕ່າງໆໃນປຶ້ມ."

ປະຈຸບັນນີ້, ກຸ່ມຄູ່ຮ່ວມພັດທະນາກຳລັງຝຶກອົບຮົມອາສາສະໝັກບ້ານ ເພື່ອຈັດກິດຈະກຳຕັ້ງຄ້າຍ ເພື່ອສົ່ງເສີມການອ່ານໃຫ້ກັບເດັກນ້ອຍຫຼັງຈາກເວລາເລີກຮຽນ ຫຼື ໃນວັນພັກຮຽນເສົາອາທິດ. ເດັກນ້ອຍສາມາດເຂົ້າຮ່ວມກິດຈະກຳສົ່ງເສີມການອ່ານນີ້ອາທິດລະຄັ້ງ ເພື່ອມ່ວນຊື່ນກັບການອ່ານ ແລະ ສ້າງອຸປະກອນການຮຽນແບບງ່າຍດາຍ ໂດຍການນຳໃຊ້ສິ່ງທີ່ມີຢູ່ຕາມທ້ອງຖິ່ນຂອງຕົນ ແລະ ໄດ້ຮັບການຊ່ວຍເຫຼືອຈາກບັນດາອາສາສະໝັກ.

"ຖ້ານໃສ່ປຶ້ມເຫຼົ່ານີ້ ຈະສ້າງແຮງຈູງໃຈໃຫ້ແກ່ນັກຮຽນ ລວມທັງນັກຮຽນຊົນເຜົ່າຕ່າງໆໃນໝູ່ບ້ານຂອງພວກເຮົາ ຜູ້ທີ່ບໍ່ຄ່ອຍມີຄວາມໝັ້ນໃຈໃນການອ່ານພາສາລາວ ໃຫ້ສົນໃຈເຂົ້າມາເບິ່ງປຶ້ມ ແລະ ສົນທະນາກັນກ່ຽວກັບຮູບພາບຕ່າງໆໃນປຶ້ມ."

ທ່ານນາງ ພວງ ບຸນມີໄຊ, ຄູສອນຢູ່ ໂຮງຮຽນປະຖົມປ່າຫວານ, ເມືອງຊຳເໜືອ.





# ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ຍົກສູງວຽກງານການປັບປຸງການຮຽນ-ການສອນວິຊາພາສາລາວໃຫ້ແກ່ນັກຮຽນຊັ້ນປະຖົມສຶກສາ

ແຂວງຊຽງຂວາງເປັນແຂວງທີ່ມີຊື່ສຽງເລື່ອງທົ່ງໄຫຫີນ ເຊິ່ງເປັນສະຖານທີ່ຮ່ອງຮອຍທາງປະຫວັດສາດ ແລະ ເປັນແຂວງທີ່ເຕັມໄປດ້ວຍຄວາມຫຼາກຫຼາຍທາງດ້ານວັດທະນະທຳອັນລ້ຳຄ່າ. ແຂວງຊຽງຂວາງປະກອບດ້ວຍແປດຊົນເຜົ່າຍ່ອຍ ດ້ວຍເຫດນີ້ຈຶ່ງມີຫຼາກຫຼາຍພາສາ ແລະ ສຳນຽງທີ່ແຕກຕ່າງກັນອອກໄປ. ປະຊາກອນໃນແຂວງເກືອບເຄິ່ງໜຶ່ງແມ່ນຊົນເຜົ່າມົ້ງ ແລະ ກຶມມຸ.

ໃນຂະນະດຽວກັນ ຄວາມຫຼາກຫຼາຍດັ່ງກ່າວນີ້ ກໍ່ເປັນສິ່ງທ້າທາຍສຳລັບຄູອາຈານຊັ້ນປະຖົມຢູ່ພາຍໃນແຂວງເຊັ່ນດຽວກັນ. ເດັກນັກຮຽນຊົນເຜົ່າທີ່ເລີ່ມເຂົ້າໂຮງຮຽນແມ່ນບໍ່ສາມາດເວົ້າພາສາລາວໄດ້. ສະນັ້ນ, ເດັກນ້ອຍເຫຼົ່ານີ້ຈະມີບັນຫາໃນການຮຽນຮູ້ ເນື່ອງຈາກວ່າ ການສິດສອນຢູ່ໃນໂຮງຮຽນ, ໃນປຶ້ມແບບຮຽນ ແລະ ອຸປະກອນການຮຽນ-ການສອນ ຕ່າງໆແມ່ນໃຊ້ພາສາລາວເປັນຫຼັກ.

ໃນເດືອນສິງຫາ ປີ 2016, ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ໄດ້ຮັບທຶນຈາກກອງທຶນເພື່ອການຄົ້ນຄວ້າສິ່ງໃໝ່ດ້ານການສຶກສາຂອງແຜນງານບີຄວາ ຫຼື ກອງທຶນ BEIF. ກອງທຶນ BEIF ເປັນກອງທຶນທີ່ສົ່ງເສີມແນວຄວາມຄິດແບບໃໝ່ ແລະ ວິທີການເຮັດວຽກແບບໃໝ່ສຳລັບການສຶກສາຂັ້ນພື້ນຖານ. ເນື່ອງຈາກວ່າເດັກນ້ອຍເຄິ່ງໜຶ່ງພາຍໃນແຂວງເລີ່ມເຂົ້າຮຽນຊັ້ນປະຖົມ ໂດຍບໍ່ສາມາດເວົ້າພາສາລາວໄດ້, ທ່ານນາງ ນວນສີ ພ້ອມກັບທີມງານຂອງພະແນກສຶກສາທິການ ແລະ ກິລາແຂວງ ຈຶ່ງໄດ້ຄົ້ນຄວ້າ ແລະ ສ້າງວິທີການແບບໃໝ່ ເພື່ອປັບປຸງວິທີການສິດສອນພາສາລາວ.

ກ່ອນໜ້າທີ່ ທ່ານນາງ ນວນສີ ຈະໄດ້ມາເປັນ ຫົວໜ້າຂະແໜງເດັກກ່ອນໄວຮຽນ ແລະ ປະຖົມສຶກສາ ຢູ່ທີ່ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງນີ້ ທ່ານເຄີຍເປັນສຶກສານິເທດມາກ່ອນ ແລະ ເຄີຍໄດ້ສັງເກດເຫັນວ່າ ຄູສອນຈຳນວນບໍ່ໜ້ອຍຍັງບໍ່ທັນເຂົ້າໃຈເລິກເຊິ່ງ ກ່ຽວກັບລະບົບໂຄງສ້າງພາສາລາວ ໂດຍສະເພາະແມ່ນຫຼັກໄວຍະກອນ, ການອອກສຽງ ແລະ ການໃຊ້ວັນນະຍຸດທີ່ແຕກຕ່າງກັນ. ດັ່ງນັ້ນ, ທ່ານຈຶ່ງໄດ້ຕັດສິນໃຈສ້າງທີມງານສະເພາະກ່ຽວກັບວິຊາພາສາລາວຂຶ້ນມາ ເພື່ອຍົກລະດັບຄວາມສາມາດຂອງຄູສອນວິຊາພາສາລາວໃນທຸກຂັ້ນຮຽນຂອງຊັ້ນປະຖົມສຶກສາ ເຊິ່ງປະກອບດ້ວຍຄູສຶກສານິເທດສີ່ທ່ານທີ່ມີປະສົບການສູງພາຍໃນພະແນກສຶກສາທິການ ແລະ ກິລາແຂວງ. ທີມງານໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການກ່ຽວກັບການສອນນັກຮຽນຊົນເຜົ່າ, ການສັງເກດການໃນຫ້ອງຮຽນ ແລະ ແນວຄວາມຄິດ ເພື່ອປັບປຸງການຮຽນຂອງນັກຮຽນຊົນເຜົ່າ. ໂດຍການເຮັດວຽກຮ່ວມກັນ, ທີມງານໄດ້ຮວບຮວມວິທີການສອນທີ່ດີທີ່ສຸດທີ່ໄດ້ຈາກປະສົບການ ການສອນຕົວຈິງ ແລະ ໄດ້ສ້າງເຄື່ອງມື ແລະ ອຸປະກອນການສອນ ແລະ ຄູ່ມືແນະນຳ ໃຫ້ແກ່ຄູສອນປະຖົມຂັ້ນ ປ.1 ແລະ ປ.2 ແລະ ຄູ່ມືສຳລັບຂັ້ນ ປ.3, 4 ແລະ 5 ອີກດ້ວຍ.

ທ່ານນາງ ນວນສີ ໄດ້ກ່າວວ່າ "ຄູສອນສາມາດສອນພາສາລາວໃຫ້ນັກຮຽນຊົນເຜົ່າໄດ້ດີຂຶ້ນ ເມື່ອເຂົາເຈົ້າເຂົ້າໃຈກ່ຽວກັບລັກສະນະສະເພາະຂອງພາສາແມ່ຂອງນັກຮຽນແຕ່ລະຊົນເຜົ່າ ແລະ ປຶ້ມຄູ່ມືດັ່ງກ່າວໄດ້ກຳນົດວິທີການສອນຢ່າງລະອຽດໃຫ້ແກ່ຄູສອນ ເຊັ່ນ ວິທີສອນການອອກສຽງຕົວສະກົດທ້າຍໃຫ້ແກ່ນັກຮຽນທີ່ເປັນຄົນມົ້ງ ແລະ ຄວາມແຕກຕ່າງຂອງການອອກສຽງສຳລັບວັນນະຍຸດຕ່າງໆໃຫ້ແກ່ນັກຮຽນ ທີ່ເປັນຄົນກຶມມຸ". "ນອກຈາກນັ້ນ, ໂຄງການໃໝ່ນີ້ ຍັງສົ່ງເສີມໃຫ້ຄູສອນໃຊ້ການເລົ່າເລື່ອງຂອງທ້ອງຖິ່ນ ແລະ ສິ່ງແວດລ້ອມໃນທ້ອງຖິ່ນ ເຂົ້າໃນການຮຽນ-ການສອນຄຳສັບທີ່ສຳຄັນ ແລະ ຮູບແບບຂອງສຽງ. ພວກເຮົາຫວັງວ່າ ວິທີການນີ້ຈະຊ່ວຍໃຫ້ການສອນມີຄວາມ



ສອດຄ່ອງກັບວັດທະນະທຳໃນທ້ອງຖິ່ນຫຼາຍຂຶ້ນ ແລະ ສົ່ງເສີມການມີສ່ວນຮ່ວມຂອງເດັກນ້ອຍໃນ ຫ້ອງຮຽນຫຼາຍຂຶ້ນ. ສິ່ງທີ່ສຳຄັນທີ່ສຸດ ກໍຄືທາງທີມງານຫວັງຢ່າງຍິ່ງວ່າໂຄງການນີ້ຈະຊ່ວຍໃຫ້ ນັກຮຽນຊົນເຜົ່າສາມາດຮຽນພາສາລາວໄດ້ດີຂຶ້ນ."

ໃນໂຄງການທົດລອງ ໄດ້ມີການຝຶກອົບຮົມເປັນເວລາ 5 ວັນ ໃຫ້ແກ່ຄູສອນຊັ້ນປະຖົມແຕ່ ປ.1 - ປ.5 ຈຳນວນ 91 ທ່ານ ໃນ 12 ໂຮງຮຽນພາຍໃນແຂວງ. ຫຼັງຈາກນັ້ນ, ທາງທີມງານກໍ່ໄດ້ມີການລົງຕິດຕາມຢ່າງເປັນປົກກະຕິ ເພື່ອຊຸກຍູ້ບັນດາຄູສອນໃນຫ້ອງຮຽນໂດຍໄດ້ໃຫ້ຄຳແນະນຳ, ເປັນທີ່ປຶກສາ ແລະ ໃຫ້ຄວາມຊ່ວຍເຫຼືອໃນດ້ານວິຊາການແກ່ຄູສອນ.

ບັນດາຄູສອນມີຄວາມດີໃຈທີ່ໄດ້ຮຽນຮູ້ທັກສະໃໝ່ໆ. ທ່ານນາງ ວຽງແກ້ວ, ຄູສອນຈາກໂຮງຮຽນປະຖົມສີພົມໄດ້ເວົ້າວ່າ "ຂ້າພະເຈົ້າຍັງບໍ່ເຄີຍໄດ້ຮຽນກ່ຽວກັບວິທີການສອນໂຄງສ້າງວິຊາພາສາລາວມາກ່ອນ, ແຕ່ປັດຈຸບັນນີ້ ຂ້າພະເຈົ້າສາມາດອະທິບາຍວິທີການຂຽນປະໂຫຍກ ແລະ ການຈຳແນກພາກສ່ວນຕ່າງໆຂອງປະໂຫຍກ ໃຫ້ແກ່ນັກຮຽນໄດ້ຢ່າງຊັດເຈນ ເຊິ່ງຊ່ວຍໃຫ້ນັກຮຽນສາມາດເຂົ້າໃຈບົດເລື່ອງທີ່ອ່ານ", ແລະ ທ່ານສຸກສະຫວັນ, ຄູ ແລະ ຮອງຜູ້ອຳນວຍການໂຮງຮຽນໜອງນ້ຳ ຍັງໄດ້ກ່າວອີກວ່າ "ນັກຮຽນໃນຫ້ອງຂ້າພະເຈົ້າຖາມ ຄຳຖາມຫຼາຍຂຶ້ນ".

ຈາກການລົງຕິດຕາມໂຄງການຕົວຈິງ ເຖິງແມ່ນວ່າ ໂຄງການຈະຖືກດຳເນີນມາພຽງແຕ່ 7 ເດືອນເທົ່ານັ້ນ ເຫັນວ່ານັກຮຽນ ມີຄວາມກະຕືລືລົ້ນໃນການຮຽນດີຂຶ້ນ. ບັນດາກິດຈະກຳ ແລະ ວິທີການສອນຂອງຄູຢູ່ໃນຫ້ອງຮຽນໄດ້ມີການປ່ຽນແປງ, ຄູສອນໄດ້ນຳໃຊ້ອຸປະກອນການຮຽນ-ການສອນທີ່ນັກຮຽນຄຸ້ນເຄີຍ ໂດຍການນຳໃຊ້ສິ່ງທີ່ສາມາດຫາໄດ້ຈາກປ່າໄມ້ ແລະ ສະພາບແວດລ້ອມຢູ່ໃນທ້ອງຖິ່ນ. ການທີ່ໃຫ້ນັກຮຽນແຕ່ລະຄົນໃຊ້ກະດານດຳນ້ອຍນັ້ນໄດ້ເຮັດໃຫ້ຄູສາມາດຊ່ວຍເຫຼືອນັກຮຽນໄດ້ຢ່າງທົ່ວເຖິງ ແລະ ສາມາດປະເມີນຄວາມກ້າວໜ້າຂອງນັກຮຽນແຕ່ລະຄົນໄດ້ຕາມຄວາມເປັນຈິງ ແລະ ໃນປັດຈຸບັນ ບັນຍາກາດການຮຽນ-ການສອນຢູ່ພາຍໃນຫ້ອງຮຽນແມ່ນເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ ແລະ ມ່ວນຊື່ນ.

> "ຄູສອນສາມາດສອນພາສາລາວໃຫ້ນັກຮຽນຊົນເຜົ່າໄດ້ດີຂຶ້ນເມື່ອເຂົາເຈົ້າເຂົ້າໃຈກ່ຽວກັບລັກສະນະສະເພາະຂອງພາສາແມ່ຂອງນັກຮຽນແຕ່ລະຊົນເຜົ່າ ແລະ ປຶ້ມຄູ່ມືດັ່ງກ່າວໄດ້ກຳນົດວິທີການສອນຢ່າງລະອຽດໃຫ້ແກ່ຄູສອນ ເຊັ່ນ ວິທີສອນການອອກສຽງຕົວສະກົດທ້າຍໃຫ້ແກ່ນັກຮຽນທີ່ເປັນຄົນມົ້ງ ແລະ ຄວາມແຕກຕ່າງຂອງການອອກສຽງສຳລັບວັນນະຍຸດຕ່າງໆ ໃຫ້ແກ່ນັກຮຽນທີ່ເປັນຄົນກຶມມຸ."
>
> ທ່ານນາງ ນວນສີ, ຫົວໜ້າຂະແໜງເດັກກ່ອນໄວຮຽນ ແລະ ປະຖົມສຶກສາ ສກຂ ຊຽງຂວາງ.



# ສິ່ງອຳນວຍຄວາມສະດວກທີ່ດີກວ່າ ເພື່ອການຮຽນຮູ້ທີ່ດີຂຶ້ນ

ການຮຽນຫຍຸ້ງຍາກຂຶ້ນ ເມື່ອມີນ້ຳຝົນພັດລອດຜ່ານຕາມຝາຫ້ອງຮຽນ ຫຼື ບໍ່ມີໂຕະພຽງພໍໃຫ້ຂຽນໜັງສື. ເຈົ້າຈະໄປໂຮງຮຽນໄດ້ແນວໃດ ຖ້າເຈົ້ານັ່ງຢູ່ເທິງລໍ້ເລື່ອນ ແຕ່ໂຮງຮຽນພັດມີແຕ່ຂັ້ນໄດ ເພື່ອເຂົ້າເຖິງຫ້ອງຮຽນ? ແລະ ເຈົ້າຈະຮັກສາສຸຂະພາບ ໃຫ້ແຂງແຮງໄດ້ແນວໃດ ໃນເມື່ອໂຮງຮຽນບໍ່ມີຫ້ອງນ້ຳ ຫຼື ກ໋ອກນ້ຳ ເພື່ອລ້າງມືຂອງ ເຈົ້າໃຫ້ສະອາດ?



ສະພາບແວດລ້ອມຂອງໂຮງຮຽນມີຄວາມສຳຄັນ ໃນການຮັບປະກັນຄວາມປອດໄພ ແລະ ຊີວິດການເປັນຢູ່ຂອງນັກຮຽນທີ່ຍັງໜຸ່ມນ້ອຍ; ແລະ ຍິ່ງໄປກວ່ານັ້ນ ແມ່ນມີຄວາມສຳຄັນຕໍ່ຄຸນນະພາບຂອງການຮຽນຮູ້ ແລະ ການສິດສອນ ອີກດ້ວຍ.

ດັ່ງນັ້ນ ໃນປີທີ່ຜ່ານມານີ້, ແຜນງານບີຄວາ ຈຶ່ງໄດ້ໃຫ້ບຸລິມະສິດໃນການບູລະນະສ້ອມແປງຫ້ອງຮຽນ ແລະ ຫ້ອງນ້ຳໃນໂຮງຮຽນປະຖົມ ຈຳນວນ 389 ແຫ່ງ ໃນ 21 ເມືອງທີ່ທຸກຍາກທີ່ສຸດຂອງແຂວງ ຜົ້ງສາລີ, ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ, ເຊກອງ ແລະ ອັດຕະປື.

ໂຮງຮຽນເຫຼົ່ານີ້ຕັ້ງຢູ່ໃນເຂດຫ່າງໄກສອກຫຼີກ ແລະ ບາງແຫ່ງແມ່ນຕ້ອງໄດ້ຍ່າງເທົ່ານັ້ນຈຶ່ງສາມາດເຂົ້າເຖິງໄດ້; ສະນັ້ນ ການຈັດຫາວັດສະດຸ ແລະ ການກໍ່ສ້າງ ແມ່ນມີຄວາມຍາກລຳບາກ.

ທ່ານ ສຸລິຍານ ວຽງຄຳສອນ, ຫົວໜ້າຜູ້ຄວບຄຸມດ້ານເຕັກນິກພື້ນຖານໂຄງລ່າງ ໄດ້ອະທິບາຍວ່າ: "ມີໂຮງຮຽນຫຼາຍແຫ່ງ ທີ່ຈຳເປັນຕ້ອງໄດ້ຮັບການສ້ອມແປງ ຍ້ອນວ່າ ການກໍ່ສ້າງໃນເບື້ອງຕົ້ນບາງຄັ້ງໄດ້ນຳໃຊ້ວັດສະດຸທີ່ມີຄຸນນະພາບຕ່ຳ. ຕົວຢ່າງ, ຫຼັງຄາໂຮງຮຽນມີຮູຮົ່ວຍ້ອນວ່າບໍ່ມີວັດສະດຸທີ່ເໝາະສົມໃນການມຸງຫຼັງຄາໃນເວລາກໍ່ສ້າງ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ປ່ຽນຫຼັງຄາທີ່ເຂົ້າໜ້ຽງໃໝ່ໝົດ".

ທ່ານ ສຸລິຍານ ໄດ້ກ່າວຕື່ມອີກວ່າ: "ໃນບ່ອນທີ່ເປັນໄປໄດ້, ທີມງານຂອງພວກເຮົາ ໄດ້ປັບປຸງພື້ນຫ້ອງຮຽນຈາກພື້ນດິນທຳມະດາໃຫ້ເປັນພື້ນຄອນກີດ ເພື່ອເຮັດໃຫ້ຫ້ອງຮຽນມີຄວາມສະອາດຂຶ້ນກວ່າເກົ່າ ແລະ ມີສະພາບແວດລ້ອມທີ່ດີ ຕໍ່ສຸຂະພາບ ແລະ ການຮຽນຮູ້ຂອງເດັກນ້ອຍ. ນອກຈາກນີ້, ຖ້າເຫັນວ່າຈຳເປັນ, ພວກເຮົາຍັງໄດ້ກໍ່ສ້າງທາງເຂົ້າສຳລັບຄົນພິການ ແລະ ກວດກາເບິ່ງປະຕູທາງເຂົ້າວ່າມີຂະໜາດກວ້າງພຽງພໍ ທີ່ຈະໃຫ້ລົດເຂັນຄົນພິການສາມາດຜ່ານເຂົ້າໄປໄດ້."

**ເຈົ້າຈະຂຽນໄດ້ແນວໃດ ໃນເມື່ອຕັ່ງບໍ່ພໍນັ່ງ ຫຼື ບໍ່ມີໂຕະວາງປຶ້ມຂຽນ? ເຈົ້າຈະຮັກສາສຸຂະພາບໃຫ້ແຂງແຮງໄດ້ແນວໃດ ໃນເມື່ອໂຮງຮຽນບໍ່ມີຫ້ອງນ້ຳ ຫຼື ກ໋ອກນ້ຳ ເພື່ອລ້າງມືຂອງເຈົ້າໃຫ້ສະອາດ?**



ທ່ານ ດາວວອນ ສີເຮືອງໄຊ, ຜູ້ຈັດການວຽກງານພື້ນຖານໂຄງລ່າງ ໄດ້ກ່າວວ່າ "ກະດານດຳແບບເກົ່າ ແມ່ນເຮັດຈາກໄມ້ອັດທາສີ ເຊິ່ງການຂຽນໃສ່ກະດານແບບນີ້ແມ່ນມີຄວາມຫຍຸ້ງຍາກ. ຍ້ອນພູມອາກາດບ້ານເຮົາ ແລະ ການນຳໃຊ້ວັດສະດຸທີ່ມີຄຸນນະພາບຕ່ຳ ເຮັດໃຫ້ສີຂອງກະດານດຳດັ່ງກ່າວລອກອອກງ່າຍ. ດ້ວຍເຫດນີ້, ພວກເຮົາຈຶ່ງໄດ້ປ່ຽນກະດານເຫຼົ່ານັ້ນແທນດ້ວຍກະດານດຳທີ່ເຮັດຈາກໂລຫະ ແລະ ທາສີທີ່ໄດ້ຄຸນນະພາບເຊິ່ງສາມາດຂີດຂຽນ ແລະ ເບິ່ງເຫັນໄດ້ດີຂຶ້ນ."

ໃນບາງໂຮງຮຽນ, ຫ້ອງນ້ຳບໍ່ສາມາດນຳໃຊ້ໄດ້ ຍ້ອນວ່າລະບົບການຈັດສົ່ງນ້ຳເປ່ເພ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ສ້ອມແປງລະບົບດັ່ງກ່າວ ແລະ ສິ່ງທີ່ຈຳເປັນເພື່ອຮັບປະກັນວ່າມີຫ້ອງນ້ຳທີ່ໃຊ້ໄດ້ ສຳລັບນັກຮຽນ ແລະ ຄູສອນ.

ການສ້ອມແປງໄດ້ນຳໃຊ້ຮູບແບບການກໍ່ສ້າງ ໂດຍໃຫ້ຊຸມຊົນເປັນເຈົ້າການ ເຊິ່ງທາງຄະນະພັດທະນາການສຶກສາຂັ້ນບ້ານ ເປັນຜູ້ຄຸ້ມຄອງການສ້ອມແປງດ້ວຍການຈ້າງແຮງງານໃນຊຸມຊົນ ແລະ ໄດ້ຮັບການຊີ້ນຳຈາກທາງວິສະວະກອນຂອງແຜນງານບີຄວາ ແລະ ພະນັກງານຈາກຫ້ອງການສຶກສາທິການ ແລະກິລາເມືອງ. ທ່ານ ທິບທະມົນ ຈັນທະລັງສີ, ອະດີດຫົວໜ້າພະແນກຄຸ້ມຄອງອອກແບບກໍ່ສ້າງ ແລະ ສ້ອມແປງຂອງກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຮູ້ວ່າ: "ຮູບແບບການກໍ່ສ້າງສ້ອມແປງດັ່ງກ່າວນີ້ ຈະຊ່ວຍເສີມສ້າງຄວາມເປັນເຈົ້າການຂອງຊຸມຊົນ ທີ່ມີຕໍ່ໂຮງຮຽນຫຼາຍຂຶ້ນ."

ພະນັກງານຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ທີມວິສະວະກອນຂອງແຜນງານບີຄວາ ໄດ້ລົງໄປຢ້ຽມຢາມ ໂຮງຮຽນທັງໝົດ ຈຳນວນ 389 ແຫ່ງ ເພື່ອຝຶກອົບຮົມ ທາງດ້ານວິຊາການ ແລະ ການເງິນ ໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ

ຈຳນວນຫຼາຍກວ່າ 4,000 ຄົນ. ທ່ານ ທິບພະມີນ ກ່າວສະຫຼຸບໄວ້ວ່າ "ຮູບແບບການກໍ່ສ້າງໂດຍໃຫ້ຊຸມຊົນເປັນເຈົ້າການນີ້ ນອກຈາກຈະເປັນການໃຊ້ຈ່າຍຢ່າງມີປະສິດທິຜົນແລ້ວ ການສ້າງຄວາມເຂັ້ມແຂງໃຫ້ບ້ານ ຈະເປັນການຮັບປະກັນວ່າທັກສະຕ່າງໆ ທີ່ພວກເຂົາໄດ້ຮຽນຮູ້ຈະຍັງຄົງຢູ່ກັບພວກເຂົາ ເຊິ່ງຈະສ້າງຄວາມຍືນຍົງ ແລະ ເຮັດໃຫ້ພວກເຂົາມີຄວາມສາມາດໃນການບຳລຸງຮັກສາໂຮງຮຽນ ຕໍ່ໄປໃນອະນາຄົດໄດ້."



ມາຮອດປະຈຸບັນນີ້, ຄູສອນ ແລະ ນັກຮຽນ ໃນໂຮງຮຽນ ຈຳນວນ 389 ແຫ່ງ ທີ່ຕັ້ງຢູ່ໃນເຂດຫ່າງໄກສອກຫຼີກ ແລະ ຊຸມຊົນທີ່ດ້ອຍໂອກາດ ໄດ້ມີຫ້ອງຮຽນທີ່ມີຄວາມປອດໄພ, ຖືກຫຼັກສຸຂະອະນາໄມ, ມີອຸປະກອນການຮຽນ-ການສອນຢ່າງພຽງພໍ ແລະ ເປັນຫ້ອງຮຽນແບບຮຽນຮ່ວມຢ່າງແທ້ຈິງ.

"ແລະ ການສ້າງຄວາມເຂັ້ມແຂງໃຫ້ບ້ານ ຈະເປັນການຮັບປະກັນວ່າ ທັກສະຕ່າງໆທີ່ພວກເຂົາໄດ້ຮຽນຮູ້ຈະຍັງຄົງຢູ່ກັບພວກເຂົາເຊິ່ງຈະສ້າງຄວາມຍືນຍົງ ແລະ ເຮັດໃຫ້ພວກເຂົາມີຄວາມສາມາດ ໃນການບຳລຸງຮັກສາໂຮງຮຽນ ຕໍ່ໄປໃນອະນາຄົດໄດ້. "

ທ່ານ ທິບພະມີນ, ອະດີດຫົວໜ້າພະແນກຄຸ້ມຄອງອອກແບບກໍ່ສ້າງ ແລະ ສ້ອມແປງ, ກະຊວງສຶກສາທິການ ແລະ ກິລາ



# 6 ກິດຈະກຳພົ້ນເດັ່ນ ໃນປີ 2017

## 3 ຜົນສຳເລັດພົ້ນເດັ່ນ ໃນເດືອນມັງກອນ-ມິຖຸນາ 2017



**ສຳເລັດການປັບປຸງຂອບຫຼັກສູດຊັ້ນປະຖົມ** ໂດຍສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ສຳເລັດຮ່າງປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນ ປ.1 ແລະ ໄດ້ຮັບການທົດລອງນຳໃຊ້ຢູ່ໂຮງຮຽນປະຖົມ 25 ແຫ່ງ. ຫຼັກສູດຊັ້ນປະຖົມສະບັບນີ້ແມ່ນມີບົດບາດສຳຄັນໃນການປັບປຸງຜົນການຮຽນຂອງນັກຮຽນ.



ນັກຮຽນຂັ້ນ ປ.3 ຈຳນວນ 17,535 ຄົນ ໄດ້ເຂົ້າຮ່ວມການປະເມີນວັດລະດັບຄວາມເຂົ້າໃຈຂອງເຂົາເຈົ້າທາງດ້ານພາສາລາວ ແລະ ຄວາມສາມາດດ້ານຄະນິດສາດຂັ້ນພື້ນຖານ. **ຜົນຂອງການປະເມີນຜົນການຮຽນ** (ASLO3) ຄັ້ງນີ້ຈະຊ່ວຍໃຫ້ກະຊວງສຶກສາທິການ ແລະ ກິລາ, ລັດຖະບານອົດສະຕຣາລີ, ແລະ ຄູ່ຮ່ວມພັດທະນາອື່ນໆ ສາມາດວາງເປົ້າໝາຍ ແລະ ຕິດຕາມກວດກາຜົນໄດ້ຮັບຂອງການຊ່ວຍເຫຼືອໄດ້ດີຂຶ້ນກວ່າເກົ່າ.



ເດັກນ້ອຍຈຳນວນ 20,000 ຄົນ ໃນ 171 ບ້ານ ໄດ້ຮັບຜົນປະໂຫຍດຈາກ **ກິດຈະກຳສົ່ງເສີມການອ່ານໃນຂັ້ນຊຸມຊົນ** ໂດຍໄດ້ມີການສ້າງຕັ້ງປຶ້ມ ຈຳນວນ 171 ແຫ່ງ ແລະ ແຈກຢາຍປຶ້ມຫຼາຍກວ່າ 43,000 ຫົວ.

## 3 ກິດຈະກຳຫຼັກ
## ສຳລັບແຜນ ເດືອນກໍລະກົດ-ເດືອນທັນວາ 2017



ນັກຮຽນຈຳນວນ 214 ຄົນ ໃນ 364 ຄົນ ຈາກ **ໂຄງການທຶນການສຶກສາຄູຊົນເຜົ່າ** ໄດ້ເລີ່ມເຂົ້າຮຽນປີສຸດທ້າຍຂອງພວກເຂົາ ຢູ່ທີ່ວິທະຍາໄລຄູ ໃນເດືອນກັນຍານີ້. ເມື່ອຈົບການສຶກສາແລ້ວພວກເຂົາຈະກັບໄປເປັນຄູຢູ່ບ້ານຂອງພວກເຂົາ ທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ ທາງການສຶກສາ ໃນ ສປປ ລາວ.




**ກອງທຶນສະໜັບສະໜູນຂັ້ນເມືອງ** ຈະຖືກຈັດສັນໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງເປົ້າໝາຍທົດລອງ ເພື່ອນຳໃຊ້ເຂົ້າໃນວຽກງານສະໜັບສະໜູນໂຮງຮຽນ, ການພັດທະນາວິຊາຄູ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ.



**ຫຼັກສູດສ້າງຄູ** ຈະຖືກປັບປຸງ ເພື່ອໃຫ້ສອດຄ່ອງກັບຫຼັກສູດຊັ້ນປະຖົມ.



ກະຊວງສຶກສາທິການ ແລະ ກິລາ
ເລກທີ 1, ຖະໜົນລ້ານຊ້າງ
ນະຄອນຫຼວງວຽງຈັນ
ສປປ ລາວ

+856 30 5412422
info@bequal-laos.org

www. bequal-laos.org